ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ຫ້ອງວ່າການສຳນັກງານນາຍົກລັດຖະມົນຕີ

ເລກທີ 2022 /ຫສນຍ.ກນກ

ນະຄອນຫຼວງວຽງຈັນ, ວັນທີ 26-11-20

## ແຈ້ງການ

ຮຽນ: ທ່ານ ລັດຖະມົນຕີ ກະຊວງວິທະຍາສາດ ແລະ ເຕັກໂນໂລຊີ ທີ່ນັບຖື

ເລື່ອງ: ຂໍທິດຊີ້ນຳໃນການອອກ ຂໍ້ຕົກລົງວ່າດ້ວຍ ຄ່າກວດສອບຄຸນນະພາບວັດສະດຸກໍ່ສ້າງ, ເຄື່ອງໃຊ້ໄຟຟ້າ ແລະ ເອເລັກໂຕຣນິກ ຢູ່ ສປປ ລາວ ຂອງກະຊວງວິທະຍາສາດ ແລະ ເຕັກໂນໂລຊີ

- ອີງຕາມ ໜັງສືສະເໜີຂອງກະຊວງ ວິທະຍາສາດ ແລະ ເຕັກໂນໂລຊີ ສະບັບເລກທີ 1870/ກວຕ, ລົງວັນທີ 24 ຕຸລາ 2018;
- ອີງຕາມ ການຊີ້ນຳຂອງທ່ານ ນາຍົກລັດຖະມົນຕີ ລົງວັນທີ 23 ພະຈິກ 2018.

ຫ້ອງວ່າການສຳນັກງານນາຍົກລັດຖະມົນຕີ ຂໍຖືເປັນກຽດແຈ້ງການຕົກລົງຂອງທ່ານ ນາຍົກລັດຖະມົນຕີ ມາຍັງທ່ານ ຊາບ ດັ່ງນີ້: "ເຫັນດີອະນຸມັດໃຫ້ ກະຊວງວິທະຍາສາດ ແລະ ເຕັກໂນໂລຊີ ອອກຂໍ້ຕົກລົງວ່າດ້ວຍ ຄ່າກວດສອບຄຸນນະພາບວັດສະດຸກໍ່ສ້າງ, ເຄື່ອງໃຊ້ໄຟຟ້າ ແລະ ເອເລັກໂຕຣນິກ ຢູ່ ສປປ ລາວ. ພ້ອມນັ້ນ, ກໍໃຫ້ ກະຊວງວິທະຍາສາດ ແລະ ເຕັກໂນໂລຊີ ຈັດຕັ້ງປະຕິບັດວຽກງານດັ່ງກ່າວ ແລະ ດຳເນີນການຖອດຖອນບົດຮຽນປະເມີນຜົນໃນໄລຍະໜຶ່ງປີ, ແລ້ວລາຍງານຕໍ່ຂັ້ນເທິງ ເພື່ອໃຫ້ທິດຊີ້ນຳສືບຕໍ່ວຽກງານດັ່ງກ່າວ ຕາມລະບຽບການ"

ດັ່ງນັ້ນ, ຈຶ່ງແຈ້ງມາຍັງທ່ານ ເພື່ອຊາບ ແລະ ຈັດຕັ້ງປະຕິບັດເນື້ອໃນຂ້າງເທິງໃຫ້ໄດ້ຮັບຜົນດີ.

ລັດຖະມົນຕີ,

ຫົວໜ້າຫ້ອງວ່າການສຳນັກງານນາຍົກລັດຖະມົນຕີ

ເພັດ ພົມພິພັກ

ບ່ອນນຳສົ່ງ:

| | |
|---|---|
| - ນາຍົກ-ຮອງນາຍົກລັດຖະມົນຕີ | 04 ສະບັບ; |
| - ຫ້ອງວ່າການສູນກາງພັກ | 01 ສະບັບ; |
| - ກະຊວງການເງິນ | 01 ສະບັບ; |
| - ກະຊວງອຸດສາຫະກຳ ແລະ ການຄ້າ | 01 ສະບັບ; |
| - ກະຊວງໂຍທາທິການ ແລະ ຂົນສົ່ງ | 01 ສະບັບ; |
| - ຄະນະ ຫສນຍ ທ່ານລະ. | 01 ສະບັບ; |
| - ກົມບໍລິຫານ ຫສນຍ | 01 ສະບັບ; |
| - ເກັບມ້ຽນ | 01 ສະບັບ. |